ບົດວິເຄາະທາງການເງິນ ແລະ ຄຳອະທິບາຍຂອງຜູ້ບໍລິຫານ (MD&A) ປະຈຳປີ 2025

1. ບົດສະຫຼຸບຂອງຄະນະຜູ້ບໍລິຫານ


- ບໍລິສັດມີກຳໄລສຸດທິ 10,369.5 ລ້ານກີບ, ເຊິ່ງເປັນກຳໄລສຸດທິທີ່ສູງທີ່ສຸດນັບແຕ່ບໍລິສັດເລີ່ມດຳເນີນທຸລະກິດ
- ການປ່ອຍສິນເຊື່ອໃໝ່ ບັນລຸເຖິງ 104,792 ລ້ານກີບ, ເຊິ່ງເປັນຄັ້ງທຳອິດທີ່ມູນຄ່າສິນເຊື່ອທີ່ປ່ອຍໃໝ່ປະຈຳປີ ສູງເກີນ 100,000 ລ້ານກີບ.
- ບໍລິສັດໃຫ້ຄວາມສຳຄັນກັບທຸລະກິດສິນເຊື່ອລົດຈັກ ເຊິ່ງມີສັດສ່ວນປະມານ 75% ຂອງມູນຄ່າສິນເຊື່ອທີ່ປ່ອຍໃໝ່ທັງໝົດ.
- ບໍລິສັດມຸ່ງເນັ້ນການດູແລລູກຄ້າທີ່ມີປະຫວັດການຊຳລະໜີ້ທີ່ດີ ໂດຍຈັດແຄມເປັນພິເສດ ໂດຍສະເພາະ ລູກຄ້າສິນເຊື່ອຄຳ.

2. ຜົນການດຳເນີນງານ ແລະ ການຕະຫຼາດ

ໃນ 2025 ບໍລິສັດມີການອະນຸມັດສິນເຊື່ອໃຫ່ມ ຈຳນວນ 3,734 ສັນຍາ ຫຼຸດລົງ 98 ສັນຍາ ຫຼື ຫຼຸດລົງ 2.6 ສ່ວນຮ້ອຍ, ສ່ວນຈຳນວນໃຫ້ເງິນສິນເຊື່ອ ມີຈຳນວນ 104,792 ລ້ານກີບ ເພີ່ມຂຶ້ນ 29,610 ລ້ານກີບ ຫຼື 39.4 ສ່ວນຮ້ອຍ ຈຳນວນເງິນປ່ອຍສິນເຊື່ອໃໝ່ເພີ່ມຂຶ້ນ ເນື່ອງຈາກບໍລິສັດໄດ້ຂະຫຍາຍສິນເຊື່ອໃຫ້ຫຼາຍຂຶ້ນ ຕາມແຫຼ່ງເງິນກູ້ຂອງ ບໍລິສັດທີ່ເພີ່ມຂຶ້ນ

ຕາຕະລາງ: ການອະນຸມັດສິນເຊື່ອໃຫ່ມ

ປຽບທຽບການອະນຸມັດສິນເຊື່ອລົດຈັກຂອງບໍລິສັດ ປີ 2024 ແລະ 2025				
ລາຍການ	ປີ 2024	ປີ 2025	ສ່ວນຕ່າງ	ອັດຕາສ່ວນຮ້ອຍ
ຈຳນວນສັນຍາ (ຄັນ)	3,832	3,734	-98	-2.6
ຈຳນວນເງິນໃຫ້ສິນເຊື່ອ (ລ້ານກີບ)	75,182	104,792	+29,610	+39.4



3. ການວິເຄາະທາງດ້ານການເງິນ

3.1 ລາຍຮັບ

ໃນປີ 2025 ແລະ ປີ 2024, ບໍລິສັດ ໄດ້ມີລາຍຮັບລວມທັງໝົດ ຈຳນວນ 40,939.1 ລ້ານກີບ ແລະ 56,040.2 ລ້ານກີບ ຕາມລຳດັບ ຫຼຸດລົງ 15,101.1 ລ້ານກີບ ຫຼື 26.9 ສ່ວນຮ້ອຍ ເມື່ອທຽບໃສ່ປີທີ່ຜ່ານມາ ໃນນີ້ມີລາຍຮັບດອກເບ້ຍ ປີ 2025 ຈຳນວນ 39,434.1 ລ້ານກີບ ທຽບກັບປີ 2024 ຈຳນວນ 33,570.3 ລ້ານກີບ ຕາມລຳດັບ ເພີ່ມຂຶ້ນ 5,863.8 ລ້ານກີບ ຫຼື ເພີ່ມຂຶ້ນ 17.5 ສ່ວນຮ້ອຍ

ຕາຕະລາງ : ລາຍຮັບ

ລາຍຮັບ	2024		2025		ປ່ຽນແປງ	
	ກີບ	%	ກີບ	%	ກີບ	%
ດອກເບ້ຍ	33,570.3	59.9	39.434.1	96.3	+5,863.8	+17.5
ລາຍຮັບ ອື່ນ	22,469.9	40.1	1,505.0	3.7	-20,964.9	-93.3
ລວມ ລາຍຮັບ	**56,040.2**	**100.0**	**40,939.1**	**100.0**	**-15,101.1**	**-26.9**

3.2 ລາຍຈ່າຍ

ໃນປີ 2025 ແລະ 2024, ບໍລິສັດໄດ້ມີລາຍຈ່າຍລວມທັງໝົດລວມທັງຄ່າໃຊ້ຈ່າຍທາງດ້ານການເງິນ ຈຳນວນ 27,973.1 ລ້ານກີບ ແລະ 48,636.0 ລ້ານກີບ ຕາມລຳດັບ. ໃນນີ້ ລາຍຈ່າຍລວມຫຼຸດລົງ 20,662.9 ລ້ານກີບ ຫຼື ຫຼຸດລົງ 42.4 ສ່ວນຮ້ອຍ ເມື່ອທຽບກັບປີທີ່ຜ່ານມາ ຊຶ່ງລາຍຈ່າຍທີ່ຫຼຸດລົງຈາກລາຍຈ່າຍການເງິນ ປີ 2025 ຈຳນວນ 1,157.0 ລ້ານກີບ ທຽບກັບປີ 2024 ຈຳນວນ 17,259.8 ລ້ານກີບ ຫຼື ຫຼຸດລົງ 16,102.8 ລ້ານກີບ ຫຼື ຫຼຸດລົງ 93.3 ສ່ວນຮ້ອຍ ເນື່ອງຈາກບໍລິສັດໄດ້ຊຳລະຄືນເງິນກູ້ຢືມ

ຕາຕະລາງ: ລາຍຈ່າຍ

ລາຍຈ່າຍ	31 ທັນວາ 2024		31 ທີນວາ 2025		ປ່ຽນແປງ	
	ລ້ານກີບ	%	ລ້ານກີບ	%	ລ້ານກີບ	%
ລາຍຈ່າຍໃນການບໍລິຫານ	24,410.2	50.2	23,889.3	85.4	-520.9	-2.1
ໜີ້ສິງໃສຈະສູນ	4,646.0	9.6	2,956.4	10.6	-1,689.6	-36.3
ຂາດທຶນຈາກອັດຕາແລກປ່ຽນ	2,320.0	4.8	-29.6	-0.1	-2,349.6	-101.2
ລາຍຈ່າຍການເງິນ	17,259.8	35.5	1,157.0	4.1	-16,102.8	-93.3
ລວມ ລາຍຈ່າຍ	**48,636.0**	**100.0**	**27,973.1**	**100.0**	**-20,662.9**	**-42.4**

ໃນປີ 2025 ແລະ 2024, ບໍລິສັດມີລາຍຈ່າຍລວມທີ່ປະກອບດ້ວຍ: ລາຍຈ່າຍບໍລິຫານ ເທົ່າກັບ 23,889.3 ລ້ານກີບ ຊຶ່ງເທົ່າກັບ 85.4 ສ່ວນຮ້ອຍ, ແລະ 24,410.2 ລ້ານກີບ ຊຶ່ງເທົ່າກັບ 50.2 ສ່ວນຮ້ອຍ, ໜີ້ສົງໃສຈະສູນ ເທົ່າກັບ 2,956.4 ລ້ານກີບ ຫຼື ເທົ່າກັບ 10.6 ສ່ວນຮ້ອຍ ແລະ 4,646.0 ລ້ານກີບ ຫຼື ເທົ່າກັບ 9.6 ສ່ວນຮ້ອຍ, ກຳໄລຈາກອັດຕາແລກປ່ຽນ 29.6 ລ້ານກີບ ເທົ່າກັບ 0.1 ສ່ວນຮ້ອຍ ແລະ ຂາດທຶນຈາກອັດຕາແລກປ່ຽນ 2,320.0 ລ້ານກີບ ເທົ່າກັບ 4.8 ສ່ວນຮ້ອຍ ແລະ ລາຍຈ່າຍການເງິນ ເທົ່າກັບ 1,157.0 ລ້ານກີບ ຫຼື ເທົ່າກັບ 4.1 ສ່ວນຮ້ອຍ ແລະ 17,259.8 ລ້ານກີບ ຫຼື ເທົ່າກັບ 35.5 ສ່ວນຮ້ອຍ ຕາມລຳດັບ.

ຄ່າໃຊ້ຈ່າຍໃນການບໍລິຫານ ໄດ້ລວມຄ່າໃຊ້ຈ່າຍກ່ຽວກັບພະນັກງານ, ຜົນຕອບແທນຈາກການບໍລິຫານ, ຄ່າສາທາລະນຸປະໂພກ, ຄ່າການຕະຫຼາດ, ຂາດທຶນຈາກການຂາຍຄືນຊັບສິນຢຶດຄືນ, ຄ່າເງິນລາງວັນ, ຄ່າເຊື່ອມລາຄາ ແລະ ຄ່າໃຊ້ຈ່າຍອື່ນໆ ຊຶ່ງໃນປີ 2025 ຄ່າໃຊ້ຈ່າຍລວມຫຼຸດລົງ 42.4 ສ່ວນຮ້ອຍ ໃນຂະນະທີ່ລາຍຮັບລວມ ຫຼຸດລົງ 26.9 ສ່ວນຮ້ອຍ.

3.3 ກຳໄລສຸດທິ ແລະ ອັດຕາກຳໄລສຸດທິ

ໃນປີ 2025 ແລະ ປີ 2024 ບໍລິສັດມີກຳໄລສຸດທິ ເທົ່າກັບ 10,369.5 ລ້ານກີບ ຫຼື ເທົ່າກັບ 25.3 ສ່ວນຮ້ອຍຂອງລາຍຮັບລວມ ແລະ 6,646.1 ລ້ານກີບ ຫຼື ເທົ່າກັບ 11.8 ສ່ວນຮ້ອຍຂອງລາຍຮັບລວມ ຕາມລຳດັບ ບໍລິສັດມີກຳໄລສຸດທິເພີ່ມຂຶ້ນ 3,723.4 ລ້ານກີບ ຫຼື ເທົ່າກັບ 56.0 ສ່ວນຮ້ອຍ.

3.4 ຊັບສິນ

ໃນປີ 2025 ແລະ ປີ 2024 ບໍລິສັດມີຊັບສິນທັງໝົດ 109,426.9 ລ້ານກີບ ແລະ 85,521.5 ລ້ານກີບ ຕາມລຳດັບ, ຊັບສິນຫຼາຍທີ່ສຸດ ເປັນໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ເງິນກູ້ຜ່ອນຊຳລະພາຍໃນໜຶ່ງປີ ຈຳນວນ 56,789.2 ລ້ານກີບ ທຽບກັບປີ 2024 ຈຳນວນ 56,448.6 ລ້ານກີບ ຊຶ່ງເທົ່າກັບ 51.9 ສ່ວນຮ້ອຍ ແລະ 66.0 ສ່ວນຮ້ອຍ ເມື່ອທຽບກັບຊັບສິນລວມຕາມລຳດັບການ

ຕາຕະລາງ: ຊັບສິນທັງໝົດ

ໃບສະແດງຖານະທາງການເງິນ	31 ທັນວາ 2024		31 ທັນວາ 20245	
	ລ້ານກີບ	%	ລ້ານກີບ	%
ຊັບສິນໝຸນວຽນ				
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3,766.3	4.4	598.4	0.5
ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ ແລະ ເງິນກູ້ຜ່ອນຊຳລະພາຍໃນໜຶ່ງປີ	56,448.6	66.0	56,789.2	51.9
ຊັບສິນລໍຖ້າການຂາຍ	235.0	0.3	1,929.2	1.8
ຊັບສິນໝຸນວຽນອື່ນ	1,259.8	1.5	1,312.9	1.2
ລວມ ຊັບສິນໝຸນວຽນ	**61,709.7**	**72.2**	**60,629.8**	**55.4**
ຊັບສິນ ບໍ່ໝຸນວຽນ				

ເງິນຄ້ຳປະກັນເງິນກູ້	0.0	0.0	0.0	0.0
ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ	2,000.0	2.3	2,000.0	1.8
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ	20,992.6	24.5	46,153.8	42.2
ສ່ວນປັບປຸງອາຄານ ແລະ ອຸປະກອນ	614.3	0.7	633.2	0.6
ຊັບສິນທີ່ບໍ່ມີຕົວຕົນ	0	0	0	0
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	204.9	0.2	10.0	0.0
ລວມ ຊັບສິນບໍ່ໝຸນວຽນ	**23,811.8**	**27.8**	**48,797.1**	**44.6**
ລວມຊັບສິນ	85,521.5	100.0	109,426.9	100.0

3.4.1. ຊັບສິນໝຸນວຽນ

ໃນປີ 2025 ແລະ ປີ 2024 ບໍລິສັດມີຊັບສິນໝຸນວຽນ ເທົ່າກັບ 60,629.8 ລ້ານກີບ ແລະ 61,709.7 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 55.4 ສ່ວນຮ້ອຍ ແລະ 72.2 ສ່ວນຮ້ອຍ ຂອງຊັບສິນລວມຕາມລຳດັບ

ນອກນັ້ນ ຍັງມີລາຍການຊັບສິນໝຸນວຽນຫຼັກໄດ້ແກ່ ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຈຳນວນ 598.4 ລ້ານກີບ ແລະ 3,766.3 ລ້ານກີບ ຫຼື ເທົ່າກັບ 0.5 ສ່ວນຮ້ອຍ ແລະ 4.4 ສ່ວນຮ້ອຍຂອງຊັບສິນລວມ ຕາມລຳດັບ, ຊັບສິນລໍຖ້າການຂາຍ ເທົ່າກັບ 1,929.2 ລ້ານກີບ ແລະ 235.0 ລ້ານກີບ ຫຼື ເທົ່າກັບ 1.8 ສ່ວນຮ້ອຍ ແລະ 0.3 ສ່ວນຮ້ອຍ ຂອງຊັບສິນລວມ. ຊັບສິນໝຸນວຽນອື່ນໆ ເທົ່າກັບ 1,312.9 ລ້ານກີບ ແລະ 1,259.8 ລ້ານກີບ ຫຼື ເທົ່າກັບ 1.2 ສ່ວນຮ້ອຍ ແລະ 1.5 ສ່ວນຮ້ອຍ ຂອງຊັບສິນລວມ.

3.4.2. ຊັບສິນບໍ່ໝຸນວຽນ

ໃນປີ 2025 ແລະ ປີ 2024 ບໍລິສັດມີຊັບສິນບໍ່ໝຸນວຽນເທົ່າກັບ 48,797.1 ລ້ານກີບ ແລະ 23,811.8 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 44.6 ສ່ວນຮ້ອຍ ແລະ 27.8 ສ່ວນຮ້ອຍ ຂອງຊັບສິນລວມຕາມລຳດັບ ຊັບສິນຫຼາຍທີ່ສຸດ ເປັນ ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະໜີ້ຕ້ອງຮັບຈາກເງິນກູ້ຜ່ອນຊຳລະ ເທົ່າກັບ 46,153.8 ລ້ານກີບ ທຽບກັບປີ 2024 ເທົ່າກັບ 20,992.6 ລ້ານກີບ ເພີ່ມຂຶ້ນ 25,161.2 ລ້ານກີບ ຫຼື ເທົ່າກັບ 119.9 ສ່ວນຮ້ອຍ ເພາະບໍລິສັດມີການຂະຫຍາຍສິນເຊື່ອໄດ້ເພີ່ມຂຶ້ນ

ນອກນັ້ນຍັງມີລາຍການຊັບສິນໝຸນວຽນຍັງປະກອບດ້ວຍ ເງິນຝາກທີ່ທະນາຄານແຫ່ງ ສປປ. ລາວ ເທົ່າກັບ 2,000.0 ລ້ານກີບ ແລະ 2,000.0 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 1.8 ສ່ວນຮ້ອຍ ແລະ 2.3 ສ່ວນຮ້ອຍ ຂອງຊັບສິນລວມຕາມລຳດັບ. ສ່ວນປັບປຸງອາຄານ ແລະ ອຸປະກອນ ເທົ່າກັບ 633.2 ລ້ານກີບ ແລະ 614.3 ຫຼື ເທົ່າກັບ 0.6 ສ່ວນຮ້ອຍ ແລະ 0.7 ສ່ວນຮ້ອຍ ຂອງຊັບສິນລວມ ຕາມລຳດັບ.

3.5 ໜີ້ສິນລວມ

ໃນປີ 2025 ແລະ ປີ 2024, ບໍລິສັດມີໜີ້ສິນທັງໝົດ ເທົ່າກັບ 18,175.4 ລ້ານກີບ ແລະ 4,639.5 ລ້ານກີບ ຕາມລຳດັບ ຊຶ່ງໃນປີ 2025 ບໍລິສັດສາມາດກູ້ຢືມເງິນເພີ່ມໄດ້ 11,000 ລ້ານກີບ ທັງການກູ້ຢືມໄລຍະສັ້ນ ແລະ ໄລຍະຍາວ

ຕາຕະລາງ: ໜີ້ສິນທັງໝົດ

ໃບສະແດງຖານະທາງການເງິນ	31 ທັນວາ 2024		31 ທັນວາ 2025	
	ລ້ານກີບ	%	ລ້ານກີບ	%
ໜີ້ສິນ				
ໜີ້ສິນໝຸນວຽນ				
ໜີ້ຕ້ອງສົ່ງໃນທຸລະກິດ ແລະ ໜີ້ຕ້ອງສົ່ງອື່ນໆ	3,622.5	78.1	4,431.6	24.4
ໜີ້ຕ້ອງສົ່ງອາກອນລາຍຮັບ	743.0	16.0	2,506.3	13.8
ເງິນກູ້ຢືມ	0	0.0	7,000.0	38.5
ໜີ້ສິນໝຸນວຽນອື່ນໆ	60.0	1.3	49.9	0.3
ລວມໜີ້ສິນໝຸນວຽນ	**4,425.5**	**95.4**	**13,987.9**	**77.0**
ໜີ້ສິນບໍ່ໝຸນວຽນ				
ເງິນກູ້ຢືມ	0	0.0	4,000.0	22.0
ໜີ້ສິນບໍ່ໝຸນວຽນອື່ນໆ	214.0	4.6	187.5	1.0
ລວມໜີ້ສິນບໍ່ໝຸນວຽນ	**214.0**	**4.6**	**4,187.5**	**23.0**
ໜີ້ສິນລວມ	**4,639.5**	**100.0**	**18,175.4**	**100.0**

3.5.1. ໜີ້ສິນໝຸນວຽນ

ໃນປີ 2025 ແລະ ປີ 2024, ບໍລິສັດໄດ້ມີໜີ້ສິນໝຸນວຽນ ເທົ່າກັບ 13,987.9 ລ້ານກີບ ແລະ 4,425.5 ລ້ານກີບ ຕາມລຳດັບ ຫຼື ເທົ່າກັບ 77.0 ສ່ວນຮ້ອຍ ແລະ 95.4 ສ່ວນຮ້ອຍ.

ນອກຈາກນັ້ນ ຍັງມີລາຍການໜີ້ສິນໝຸນວຽນປະກອບດ້ວຍ ໜີ້ຕ້ອງສົ່ງໃນທຸລະກິດ ແລະ ໜີ້ຕ້ອງສົ່ງອື່ນໆ ເທົ່າກັບ 4,431.6 ລ້ານກີບ ແລະ 3,622.5 ລ້ານກີບ ຕາມລຳດັບ ຫຼື 24.4 ສ່ວນຮ້ອຍ ແລະ 78.1 ສ່ວນຮ້ອຍ ຕາມລຳດັບ.

3.5.2. ໜີ້ສິນບໍ່ໝຸນວຽນ

ໃນປີ 2025 ແລະ ປີ 2024, ບໍລິສັດໄດ້ມີໜີ້ສິນບໍ່ໝຸນວຽນ ເທົ່າກັບ 4,187.5 ລ້ານກີບ ແລະ 214.0 ລ້ານກີບ ຕາມລຳດັບ ຫຼືເທົ່າກັບ 23.0 ສ່ວນຮ້ອຍ ແລະ 4.6 ສ່ວນຮ້ອຍ ຂອງໜີ້ສິນລວມທັງໝົດ ຕາມລຳດັບ

4. ການວິເຄາະລາຍງານກະແສເງິນສົດ

ໃນປີ 2025, ເງິນສົດສຸດທິທີ່ໃນການດຳເນີນງານ ຈຳນວນ 14,127.7 ລ້ານກີບ. ໃຊ້ສຳລັບຂະຫຍາຍພອດສິນເຊື່ອ ໂດຍການເພີ່ມຂຶ້ນຂອງໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ (Finance Lease) ແລະ ລູກໜີ້ຜ່ອນຊຳລະ

ເງິນສົດສຸດທິທີ່ໃຊ້ເຂົ້າໃນດ້ານການລົງທຶນ ຈຳນວນ 251.9 ລ້ານກີບ, ເຊິ່ງສ່ວນໃຫຍ່ແມ່ນໃຊ້ເຂົ້າໃນການຈັດຊື້ຊັບສົມບັດຄົງທີ່.

ເງິນສົດສຸດທິໃຊ້ໃນດ້ານການເງິນ ຈຳນວນ 11,000.0 ລ້ານກີບ, ໂດຍສະທ້ອນໃຫ້ເຫັນເຖິງເງິນສົດທີ່ໄດ້ຮັບຈາກການກູ້ຢືມ ຈຳນວນ 19,700.0 ລ້ານກີບ ຫັກອອກດ້ວຍການຊຳລະຄືນເງິນກູ້ ຈຳນວນ 8,700.0 ລ້ານກີບ.

ດ້ວຍເຫດນັ້ນ, ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ສິ້ນສຸດວັນທີ 31 ທັນວາ 2025 ຈຶ່ງມີຈຳນວນ 598.5 ລ້ານກີບ, ເຊິ່ງຫຼຸດລົງ 84.1% ເມື່ອທຽບໃສ່ປີກ່ອນ.

5. ການວິເຄາະອັດຕາສ່ວນທາງການເງິນທີ່ສຳຄັນ

ອັດຕາສ່ວນການເງິນທີ່ສຳຄັນ	ຫົວໜ່ວຍ	2024	2025	ປ່ຽນແປງ
ອັດຕາສ່ວນທຶນໝຸນວຽນ	ເທົ່າ	13.94	4.33	-9.61
ອັດຕາສ່ວນຜົນຕອບແທນຕໍ່ຊັບສິນ (ROA)	%	7.77	9.48	+1.71
ອັດຕາສ່ວນຜົນຕອບແທນຕໍ່ທຶນ (ROE)	%	8.22	11.36	+3.14
ອັດຕາສ່ວນໜີ້ຕໍ່ທຶນ (D/E ratio)	ເທົ່າ	0.06	0.20	+0.14
ອັດຕາສ່ວນກຳໄລສຸດທິ	%	11.86	25.33	+13.47
ກຳໄລພື້ນຖານຕໍ່ຮຸ້ນ (EPS)	ກີບ/ຮຸ້ນ	16.62	25.92	+9.3

6. ທິດທາງ ແລະ ແຜນການດຳເນີນງານໃນອະນາຄົດ

6.1. ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2026

- **ດ້ານການຕະຫຼາດ**

ຕາມແຜນງານປະຈຳປີ 2026 ມີນະໂຍບາຍຫຼັກ ດັ່ງນີ້:

1. ເນັ້ນຂະຫຍາຍທຸລະກິດໃຫ້ເຊົ່າສິນເຊື່ອ ລີດຈັກ ແລະ ຜ່ອນຄຳ ໂດຍການພັດທະນາຊ່ອງທາງການຕະຫຼາດທັງໃນຮູບແບບອອນລາຍ (On-line) ແລະ ອອບລາຍ (Off-line)
2. ບໍລິຫານສັດສ່ວນພອດສິນເຊື່ອໃຫ້ສອດຄ່ອງກັບກະແສເງິນສົດ ແລະ ແຫຼ່ງເງິນທຶນໃໝ່ຂອງບໍລິສັດ
3. ຂະຫຍາຍພື້ນທີ່ໃຫ້ບໍລິການໄປຍັງພາກເໜືອຂອງ ສປປ ລາວ
4. ສະແຫວງຫາແຫຼ່ງເງິນທຶນໃໝ່ ເພື່ອຮອງຮັບການຂະຫຍາຍທຸລະກິດ ທັງໃນຮູບແບບເງິນກູ້ຢືມເງິນຈາກສະຖາບັນການເງິນ ຫຼື ການອອກຮຸ້ນກູ້

- **ເງິນກູ້ຢືມ ແລະ ການຈ່າຍຄືນເງິນກູ້**

ຕາມແຜນທຸລະກິດປີ 2026, ບໍລິສັດມີແຜນຈັດຫາເງິນທຶນຈຳນວນ 49,000 ລ້ານກີບ ເພື່ອຮອງຮັບການຂະຫຍາຍພອດສິນເຊື່ອ ໂດຍຈະພິຈາລະນາທັງການກູ້ຢືມ ແລະ ການອອກຮຸ້ນກູ້ ຫາກບໍລິສັດສາມາດຈັດຫາແຫຼ່ງເງິນທຶນໄດ້ສູງກວ່າທີ່ກຳນົດໄວ້ໃນແຜນ ບໍລິສັດຈະພິຈາລະນາປັບປຸງແຜນທຸລະກິດໃຫ້ເໝາະສົມຕໍ່ໄປ.

6.2. ວຽກງານສິ່ງແວດລ້ອມ ແລະ ສັງຄົມ

- ກິດຈະກຳສະຫຼອງຄົບຮອບ 15 ປີ ຂອງບໍລິສັດ ມະຫະທຶນ

ເນື່ອງໃນໂອກາດ ສະຫຼອງຄົບຮອບ 15 ປີ ໃນປີ 2026, ບໍລິສັດມີແຜນຈັດກິດຈະກຳເພື່ອຊຸມຊົນ ເຊັ່ນ: ການບໍລິຈາກເລືອດ ແລະ ການອະນາໄມສະຖານທີ່ສາທາລະນະ. ກິດຈະກຳດັ່ງກ່າວຈະດຳເນີນໄປຕາມແຜນງານທີ່ໄດ້ຮັບການອະນຸມັດ ແລະ ຊັບພະຍາກອນທີ່ບໍລິສັດມີຢູ່

7. ຂໍ້ມູນຕິດຕໍ່ນັກລົງທຶນສຳພັນ

ທີ່ຢູ່: ຖະໜົນໄກ່ສອນພົມວິຫານ, ບ້ານ ໂພນພະເນົາ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ອີເມວ: ir@mahathuen.com
ຜູ້ຮັບຜິດຊອບ:

1. ທ່ານນາງ ສຸລິພອນ ສຸວັນໄຊລິບ ຮັກສາການ ຮອງຜູ້ອຳນວຍການດ້ານການເງິນ
2. ທ່ານນາງ ນ້ຳຝົນ ອິ່ມຈະເລີນ ພະນັກງານ ນັກລົງທຶນສຳພັນ